ECCIL
EuroCham Laos



# ປຶ້ມປົກຂາວ

## ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ຂໍ້ມູນສ່ວນບຸກຄົນ

# ປື້ມປົກຂາວ

## ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ຂໍ້ມູນສ່ວນບຸກຄົນ

ເນື້ອໃນຂອງເອກະສານສະບັບນີ້ ຖືເປັນຄວາມຮັບຜິດຊອບຂອງສະພາການຄ້າ ເອີຣົບ ປະຈໍາ ສປປ ລາວ ແຕ່ພຽງຜູ້ດຽວ ໂດຍບໍ່ໄດ້ສ່ອງແສງເຖິງທັດສະນະຄໍາເຫັນໃດໆຂອງສະຫະພາບເອີຣົບ.

ເອກະສານສະບັບນີ້ ມີຈຸດປະສົງພຽງເພື່ອສະໜອງຂໍ້ມູນຂ່າວສານເທົ່ານັ້ນ ແລະ ບໍ່ແມ່ນເພື່ອພິມເຜີຍແຜ່ ແລະ ແຈກຢາຍທົ່ວໄປ.

© 2022 ສະພາການຄ້າ ແລະ ອຸດສາຫະກໍາເອີຣົບ ປະຈໍາ ສປປ ລາວ

ຂໍສະຫງວນລິຂະສິດທີ່ມີຕໍ່ເອກະສານສະບັບນີ້. ຫ້າມບໍ່ໃຫ້ສ້າງຄືນ, ແຈກຢາຍ ຫຼືສົ່ງພາກສ່ວນໃດໜຶ່ງຂອງເອກະສານສະບັບນີ້ໃນຮູບແບບ ຫລື ທຸກຮູບການ ເຊິ່ງລວມທັງການອັດສໍາເນົາ, ການບັນທຶກຈົດກ່າຍ ຫຼື ນໍາໃຊ້ວິທີການທາງອີເລັກໂຕຣນິກ ຫລື ວິທີອື່ນໆ ເພື່ອຈຸດປະສົງທີ່ກ່າວມານັ້ນ ໂດຍປາສະຈາກການໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກ ECCIL ຍົກເວັ້ນກໍລະນີການຢືມຄໍາເວົ້າໂດຍຫຍໍ້ ເພື່ອຮັບໃຊ້ໃນການທົບທວນສໍາຄັນ ແລະ ການນໍາໃຊ້ອື່ນໆ ທີ່ບໍ່ແມ່ນເພື່ອຈຸດປະສົງທາງທຸລະກິດ ຫລື ການຄ້າຕາມຂອບເຂດທີ່ມີກົດໝາຍວ່າດ້ວຍລິຂະສິດອະນຸຍາດ. ສໍາລັບການຂໍອະນຸຍາດ, ແມ່ນໃຫ້ຂຽນຄໍາຮ້ອງໄປຫາ ECCIL ຕາມທີ່ຢູ່ຂ້າງລຸ່ມນີ້.

ຕຶກອາຄານ EUROCHAM LAOS
ບ້ານ ອານຸ,
ຕູ້ໄປສະນີ 11781 ເມືອງ ຈັນທະບູລີ, 1000
ໂທ: +856 21 264 330
Email: contact@eccil.org
www.eccil.org

# ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ຂໍ້ມູນສ່ວນບຸກຄົນ

## 1. ສະພາບໂດຍລວມກ່ຽວກັບອົງການທີ່ຮັບຜິດຊອບ

ຢູ່ ສປປ ລາວ, ໂຄງສ້າງທາງດ້ານກົດໝາຍກ່ຽວກັບຄວາມເປັນສ່ວນຕົວທາງດ້ານຂໍ້ມູນແມ່ນມຸ່ງເນັ້ນໃສ່ຂໍ້ມູນເອເລັກໂຕຣນິກ, ຊຶ່ງເປັນຂໍ້ມູນທີ່ໄດ້ຮັບການເກັບຮັກສາໄວ້ໃນຮູບແບບເອເລັກໂຕຣນິກ ເທົ່ານັ້ນ. ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ (2017) ໄດ້ກຳນົດໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ) ເປັນຜູ້ຮັບຜິດຊອບຈັດການກ່ຽວກັບບັນຫາຕ່າງໆທີ່ກ່ຽວຂ້ອງກັບການປົກປ້ອງຂໍ້ມູນເອເລັກໂຕຣນິກ. ປະຈຸບັນ, ກະຊວງດັ່ງກ່າວນີ້ໄດ້ຖືກປ່ຽນຊື່ມາເປັນ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ກຕສ). ກຕສ ຈຶ່ງເປັນໜ່ວຍງານຫຼັກຂອງລັດຖະບານທີ່ຮັບຜິດຊອບໃນການຈັດການກັບບັນຫາທີ່ກ່ຽວກັບຄວາມເປັນສ່ວນຕົວທາງດ້ານຂໍ້ມູນເອເລັກໂຕຣນິກ. ກຕສ ໄດ້ຮັບການຊ່ວຍເຫຼືອຈາກບັນດາພະແນກ ທີ່ຕັ້ງຢູ່ໃນ 17 ແຂວງໃນລາວ. ກຕສ ເປັນໜ່ວຍງານທີ່ດູແລຮັບຜິດຊອບການຮ່າງກົດໝາຍ, ຄຳແນະນຳ ແລະ ຂໍ້ຕົກລົງທີ່ລະບຸຢູ່ຂ້າງລຸ່ມນີ້. ນອກຈາກນັ້ນ, ກຕສ ຍັງໄດ້ມີການເຜີຍແຜ່ປຶ້ມແນະນຳແນວທາງສຳລັບບັນດາຜູ້ປະກອບອາຊີບ ແລະ ບຸກຄົນ ກ່ຽວກັບການຈັດຕັ້ງປະຕິບັດທີ່ດີທີ່ສຸດ ໃນການນຳໃຊ້ຊອບແວ ແລະ ຮາດແວ, ແພລັດຟອມສື່ສັງຄົມອອນລາຍ ແລະ ການປົກປ້ອງຂໍ້ມູນເອເລັກໂຕຣນິກ.

ໃນການວິເຄາະ ແລະ ຕອບໂຕ້ກັບໄພຄຸກຄາມທາງດິຈິຕອນ, ກຕສ ໄດ້ຮັບການຊ່ວຍເຫຼືອຈາກສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (LaoCERT), ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2012. LaoCERT ເປັນສູນທີ່ຢູ່ພາຍໃຕ້ການຊີ້ນຳໂດຍກົງຈາກ ກຕສ, ຊຶ່ງເປັນໜ່ວຍງານດ່ານໜ້າ ທີ່ຮັບລາຍງານກ່ຽວກັບການລະເມີດຄວາມປອດໄພຈາກບຸກຄົນ ແລະ ນິຕິບຸກຄົນຢູ່ໃນລາວ, ລວມເຖິງການຮັບຄຳຮ້ອງຮຽນກ່ຽວກັບການກະທຳຜິດທີ່ເກີດຂຶ້ນທາງອອນລາຍ.

## 2. ໂຄງສ້າງທາງດ້ານກົດໝາຍ.

ປະເທດລາວໄດ້ເລີ່ມການພັດທະນາໂຄງສ້າງທາງດ້ານກົດໝາຍກ່ຽວກັບການສື່ສານທາງເອເລັກໂຕຣນິກທີ່ຮອບດ້ານກ່ອນບາງປະເທດເພື່ອນບ້ານໃນພາກພື້ນ, ຊຶ່ງມັນໄດ້ສະແດງໃຫ້ເຫັນວ່າເຈົ້າໜ້າທີ່ໄດ້ມີຄວາມເອົາໃຈໃສ່ຢ່າງຕັ້ງໜ້າຕໍ່ກັບເລື່ອງດັ່ງກ່າວ ແລະ ເຂົ້າໃຈເຖິງຄວາມສຳຄັນ ທີ່ຮັບປະກັນວ່າ ການຂະຫຍາຍຕົວຂອງກິດຈະກຳອອນລາຍຈະຕ້ອງມາພ້ອມກັບກົດລະບຽບທີ່ເໝາະສົມ. ໃນທົດສະວັດທີ່ຜ່ານມາ, ລາວໄດ້ມີການພັດທະນາໂຄງສ້າງທາງດ້ານກົດໝາຍເພື່ອແກ້ໄຂບັນຫາກ່ຽວກັບກິດຈະກຳອອນລາຍໂດຍທົ່ວໄປ, ລວມເຖິງການນຳໃຊ້, ການໂອນ ແລະ ການປົກປ້ອງຂໍ້ມູນເອເລັກໂຕຣນິກ. ໜຶ່ງໃນນິຕິກຳສະບັບທຳອິດທີ່ບັນຍັດກ່ຽວກັບການແກ້ໄຂ ທຸລະກຳ ອອນລາຍ, ກິດຈະກຳອອນລາຍ ແລະ ການໂອນຂໍ້ມູນທາງອອນລາຍ ແມ່ນ ກົດໝາຍວ່າດ້ວຍ ທຸລະກຳທາງອີເລັກໂຕຣນິກ (2012), ຊຶ່ງໄດ້ຮັບການເຜີຍແຜ່ຄັ້ງທຳອິດຢູ່ຈົດໝາຍເຫດທາງລັດຖະການໃນປີ 2013. ຄວາມພະຍາຍາມໃນການ ພັດທະນາໂຄງສ້າງທາງດ້ານກົດໝາຍກ່ຽວກັບຂໍ້ມູນເອເລັກໂຕຣນິກ, ອາຊະຍາກຳທາງຄອມພິວເຕີ ແລະ ຄວາມເປັນສ່ວນຕົວທາງດ້ານຂໍ້ມູນໄດ້ເພີ່ມທະວີຂຶ້ນນັບຕັ້ງແຕ່ປີ 2015 ເປັນຕົ້ນມາໂດຍມີ ການປະກາດໃຊ້ ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (2015).

ປະຈຸບັນ, ໂຄງສ້າງທາງດ້ານກົດໝາຍ ທີ່ກ່ຽວຂ້ອງກັບ ຂໍ້ມູນເອເລັກໂຕຣນິກອັນຕົ້ນຕໍແມ່ນອີງໃສ່ບັນດານິຕິກຳດັ່ງຕໍ່ໄປນີ້:

- ກົດໝາຍ ວ່າດ້ວຍ ທຸລະກຳທາງອີເລັກໂຕຣນິກ (2012);
- ດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ (2014);
- ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ (2015);
- ຂໍ້ຕົກລົງ ວ່າດ້ວຍ ມາດຕະການປັບໄໝຕໍ່ຜູ້ລະເມີດກ່ຽວກັບອາຊະຍາກຳທາງລະບົບຄອມພິວເຕີ (2017);
- ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ (2017);
- ຄຳແນະນຳ ກ່ຽວກັບ ການຮັກສາຄວາມປອດໄພທາງລະບົບຄອມພິວເຕີ (2017);
- ຄຳແນະນຳ ວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ (2018);
- ຄຳແນະນຳ ວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ (2018) (ຕໍ່ໄປນີ້ເອີ້ນວ່າ “ຄຳແນະນຳ”);
- ກົດໝາຍ ວ່າດ້ວຍ ລາຍເຊັນເອເລັກໂຕຣນິກ (2018);
- ຄຳແນະນຳ ກ່ຽວກັບ ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ (2020).

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ຄຳແນະນຳສະບັບທີ່ອອກມາໃນປີ 2018 ໄດ້ກໍ່ໃຫ້ເກີດໂຄງສ້າງທາງດ້ານກົດລະບຽບຫຼັກສຳລັບການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ຄວາມເປັນສ່ວນຕົວຂອງຂໍ້ມູນເອເລັກໂຕຣນິກ. ກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ຄວບຄຸມສະເພາະຂໍ້ມູນເອເລັກໂຕຣນິກ ແລະ ບໍ່ໄດ້ມຸ່ງເນັ້ນທີ່ຈະຄວບຄຸມເຖິງຂໍ້ມູນປະເພດອື່ນ (ເຊັ່ນວ່າ: ຂໍ້ມູນທີ່ເປັນເອກະສານທີ່ບໍ່ໄດ້ເກັບໄວ້ໃນຮູບແບບເອເລັກໂຕຣນິກ). ໜຶ່ງໃນປະໂຫຍດຫຼັກຂອງກົດໝາຍເຫຼົ່ານີ້ແມ່ນ ມັນໄດ້ສ້າງໂຄງສ້າງສະເພາະເຈາະຈົງ ສຳລັບ ຂໍ້ມູນເອເລັກໂຕຣນິກ, ເມື່ອທຽບໃສ່ຮູບແບບອື່ນໆທີ່ບໍ່ໄດ້ກວມເອົາຂໍ້ມູນເອເລັກໂຕຣນິກທັງໝົດ ຫຼື ນຳໃຊ້ໂຄງສ້າງແບບທົ່ວໄປ ໃນກິດຈະກຳອອນລາຍເປັນ

## 3. ຂໍ້ສັງເກດ ກ່ຽວກັບ ຂໍ້ມູນສ່ວນບຸກຄົນ ແລະ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ມີຈຸດປະສົງໃນການປົກປ້ອງຂໍ້ມູນເອເລັກໂຕຣນິກທຸກປະເພດ [1]. ກົດໝາຍດັ່ງກ່າວໄດ້ແບ່ງຂໍ້ມູນເອເລັກໂຕຣນິກອອກເປັນ 2 ປະເພດຄື: (i) ຂໍ້ມູນທົ່ວໄປ, ແລະ (ii) ຂໍ້ມູນສະເພາະ.

ໃນນີ້, ຂໍ້ມູນທົ່ວໄປ ໝາຍເຖິງ ຂໍ້ມູນທີ່ສາມາດເຂົ້າເຖິງ, ນໍາໃຊ້ ແລະ/ຫຼື ເຜີຍແຜ່ໄດ້ ໂດຍບໍ່ຈໍາເປັນຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງຂໍ້ມູນ, ສ່ວນການເຂົ້າເຖິງ, ການນໍາໃຊ້ ແລະ/ຫຼື ການເຜີຍແຜ່ ຂໍ້ມູນສະເພາະ ແມ່ນຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງຂໍ້ມູນ. ແນວຄວາມຄິດກ່ຽວກັບ ເຈົ້າຂອງຂໍ້ມູນ ພາຍໃຕ້ ກົດໝາຍລາວ ແມ່ນໃກ້ຄຽງທີ່ສຸດກັບຄໍາວ່າ "ເຈົ້າຂອງຂໍ້ມູນ" ໃນ ລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປ ຂອງ ສະຫະພາບເອີຣົບ (GDPR) [2]. ກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ຍັງໄດ້ກໍານົດຂໍ້ຈໍາກັດກ່ຽວກັບການບໍລິຫານຈັດການຂໍ້ມູນສະເພາະເພີ່ມເຕີມອີກ. ສໍາລັບການຍົກຕົວຢ່າງເພື່ອອະທິບາຍໃຫ້ເຫັນໃນພາກຕົວຈິງ ກ່ຽວກັບ ຂໍ້ມູນທີ່ເປັນ ຂໍ້ມູນທົ່ວໄປ ຫຼື ຂໍ້ມູນສະເພາະ, ກົດໝາຍໄດ້ອີງໃສ່ ຄໍາແນະນໍາ (ກະລຸນາເບິ່ງຄໍາອະທິບາຍເພີ່ມເຕີມໄດ້ທີ່ຂໍ້ 4.4 ແລະ 4.5 ຂ້າງລຸ່ມ).

ນອກຈາກນີ້, ຍັງມີຂໍ້ມູນທີ່ຢູ່ໃນປະເພດທີ່ສາມ ຊຶ່ງສາມາດເອີ້ນວ່າ "ຂໍ້ມູນຕ້ອງຫ້າມ" ຊຶ່ງເປັນຂໍ້ມູນທີ່ບໍ່ສາມາດບໍລິຫານຈັດການດ້ວຍລະບົບເອເລັກໂຕຣນິກ. ກົງກັນຂ້າມກັບຂໍ້ມູນທີ່ຢູ່ໃນສອງປະເພດຂ້າງເທິງນັ້ນ, ຂໍ້ມູນຕ້ອງຫ້າມໄດ້ຮັບການນິຍາມຢ່າງສະເພາະເຈາະຈົງວ່າ ເປັນຂໍ້ມູນທີ່ກ່ຽວກັບເຊື້ອຊາດ, ຊົນເຜົ່າ, ຄວາມຄິດເຫັນທາງການເມືອງ, ຄວາມເຊື່ອຖືທາງສາສະໜາ, ພຶດຕິກໍາທາງເພດ, ປະຫວັດອາຊະຍາກໍາ, ຂໍ້ມູນສຸຂະພາບ ຫຼື ຂໍ້ມູນອື່ນໆ ຊຶ່ງສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ຜູ້ຄຸ້ມຄອງຂໍ້ມູນ [3] ຖືກຫ້າມບໍ່ໃຫ້ບໍລິຫານຈັດການຂໍ້ມູນປະເພດນີ້ດ້ວຍເຄື່ອງມືເອເລັກໂຕຣນິກ (ມາດຕາ 33, ຂໍ້ 3).

ໃນຂະນະທີ່ ນິຍາມຂອງຂໍ້ມູນທົ່ວໄປ, ຂໍ້ມູນສະເພາະ ແລະ ຂໍ້ມູນຕ້ອງຫ້າມ ແມ່ນຍັງບໍ່ທັນມີຄວາມຊັດເຈນປານໃດ (ກະລຸນາເບິ່ງຄໍາອະທິບາຍເພີ່ມເຕີມໄດ້ທີ່ດ້ານລຸ່ມ), ດັ່ງນັ້ນ, ຂໍ້ມູນສ່ວນບຸກຄົນຈະຖືກຈັດຢູ່ໃນປະເພດໃດໜຶ່ງໃນບັນດາສາມປະເພດດັ່ງກ່າວ ໂດຍຂຶ້ນກັບລັກສະນະສະເພາະຂອງມັນ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ບໍ່ໄດ້ກວມເອົາຂໍ້ກໍານົດສະເພາະກ່ຽວກັບຄວາມເປັນສ່ວນຕົວຂອງບຸກຄົນ ຫຼື ການປົກປ້ອງຂໍ້ມູນສ່ວນບຸກຄົນທີ່ກ່ຽວຂ້ອງກັບບຸກຄົນ. ແຕ່ກົດໝາຍໃຫ້ນິຍາມຄໍາວ່າ "ຂໍ້ມູນສ່ວນບຸກຄົນ" ແບບກ້ວາງໆໄວ້ວ່າແມ່ນຂໍ້ມູນເອເລັກໂຕຣນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ. [4]

ໃນກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ການຄຸ້ມຄອງຂໍ້ມູນ ໄດ້ຮັບການນິຍາມວ່າແມ່ນ ການບໍລິຫານ ແລະ ຈັດການຂໍ້ມູນ ຊຶ່ງລວມມີ ການເກັບ, ສໍາເນົາ, ສົ່ງ, ຮັບ, ຮັກສາ ແລະ ການທໍາລາຍຂໍ້ມູນເອເລັກໂຕຣນິກ. ແນວຄວາມຄິດນີ້ມີຄວາມຄ້າຍຄືກັນຫຼາຍກັບແນວຄວາມຄິດກ່ຽວກັບການປະມວນຂໍ້ມູນໃນ ລະບົບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງ ສະຫະພາບເອຣົບ (GDPR).

ຜູ້ອອກກົດໝາຍຂອງ ສປປ ລາວໄດ້ພະຍາຍາມກໍານົດສິດ ແລະ ພັນທະ ຂອງບັນດາກຸ່ມຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງ ທີ່ແຕກຕ່າງກັນ ແລະ ໄດ້ພະຍາຍາມປັບປຸງສິດ ແລະ ພັນທະ ຂອງຜູ້ທີ່ຜົນປະໂຫຍດກ່ຽວຂ້ອງແຕ່ລະກຸ່ມໂດຍອີງຕາມລະດັບການມີສ່ວນຮ່ວມຂອງພວກເຂົາໃນການປະມວນຂໍ້ມູນເອເລັກໂຕຣນິກ ຊຶ່ງຄືກັນກັບຢູ່ໃນລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR). ເຖິງຢ່າງໃດກໍຕາມ, ກໍຍັງມີຫຼາຍຄໍາສັບທີ່ສໍາຄັນທີ່ຍັງມີຄໍານິຍາມທີ່ບໍ່ຊັດເຈນ ແລະ ເຮັດໃຫ້ບັນດາຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງ ມີຄວາມຫຍຸ້ງຍາກໃນການຕີຄວາມໝາຍ. ອັນໄດ້ສົ່ງຜົນເຮັດໃຫ້ບຸກຄົນ ແລະ ນິຕິບຸກຄົນພົບຄວາມທ້າທາຍໃນການນໍາໃຊ້ຂໍ້ມູນເອເລັກໂຕຣນິກສໍາລັບກິດຈະກໍາທາງທຸລະກິດໂດຍປາສະຈາກການລະເມີດກົດໝາຍ. ນີ້ອາດຈະເປັນການກີດກັ້ນເຮັດໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ບໍ່ເຂົ້າມາພັດທະນາທຸລະກິດທີ່ເນັ້ນໜັກໃສ່ການນໍາໃຊ້ຂໍ້ມູນເອເລັກໂຕຣນິກ.

---

[1] ອີງຕາມມາດຕາ 2 ຂອງ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ "ຂໍ້ມູນເອເລັກໂຕຣນິກ ແມ່ນ ຂໍ້ຄວາມທີ່ເປັນຕົວເລກ, ຕົວອັກສອນ, ຮູບພາບເໜັງຕີງ, ຮູບພາບບໍ່ເໜັງຕີງ, ສຽງ, ວິດີໂອ ແລະ ອື່ນໆ ທີ່ເກັບຮັກສາໄວ້ໃນຮູບແບບເອເລັກໂຕຣນິກ".

[2] ອີງຕາມມາດຕາ 3, ຂໍ້ທີ 10, ຂອງ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ: "ເຈົ້າຂອງຂໍ້ມູນໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນເຈົ້າຂອງຂໍ້ມູນເອເລັກໂຕຣນິກ".

[3] ອີງຕາມາດຕາ 3, ຂໍ້ທີ 14 ຂອງ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ຜູ້ຄຸ້ມຄອງຂໍ້ມູນ ໝາຍເຖິງ "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີໜ້າທີ່ຄຸ້ມຄອງຂໍ້ມູນເອເລັກໂຕຣນິກ ເປັນຕົ້ນ ກະຊວງ, ສູນຂໍ້ມູນຜ່ານອິນເຕີເນັດ, ຜູ້ໃຫ້ບໍລິການໂທລະຄົມມະນາຄົມ, ຜູ້ໃຫ້ບໍລິການອິນເຕີເນັດ, ທະນາຄານ".

[4] ອີງຕາມມາດຕາ 3, ຂໍ້ທີ 12 ຂອງ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ: "ຂໍ້ມູນສ່ວນບຸກຄົນແມ່ນຂໍ້ມູນເອເລັກໂຕຣນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ".

## 4. ຄຳຄິດເຫັນຕໍ່ກັບ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ.

### 4.1. ນິຍາມຂອງຄຳວ່າ "ເຈົ້າຂອງຂໍ້ມູນ" ຍັງບໍ່ທັນມີຂອບເຂດທີ່ຊັດເຈນ.

ອີງຕາມ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ເຈົ້າຂອງຂໍ້ມູນ ແມ່ນ "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງຂໍ້ມູນເອເລັກໂຕຣນິກ" (ມາດຕາ 3, ຂໍ້ 10). ຄຳນິຍາມດັ່ງກ່າວນີ້ບໍ່ມີຄວາມຊັດເຈນເທົ່າທີ່ຄວນ ເນື່ອງຈາກວ່າມັນກວ້າງຂວາງໂພດ ແລະ ອາດຈະກວມລວມເອົາບຸກຄົນທີ່ບໍ່ໄດ້ເປັນກຸ່ມເປົ້າໝາຍຂອງຜູ້ວາງນະໂຍບາຍ. ທັງນີ້ກໍເນື່ອງຈາກວ່າຄຳສັບດັ່ງກ່າວບໍ່ໄດ້ຮັບການນິຍາມໂດຍການໝາຍເຖິງບຸກຄົນທີ່ສາມາດຖືກລະບຸຕົວຕົນໄດ້ ດ້ວຍຂໍ້ມູນດັ່ງກ່າວ, ແຕ່ວ່າ ແມ່ນບຸກຄົນທີ່ "ເປັນເຈົ້າຂອງ" ຂໍ້ມູນດັ່ງກ່າວແທນ.

ເພື່ອອະທິບາຍໃຫ້ເຫັນບັນຫາດັ່ງກ່າວນີ້, ພວກຂ້າພະເຈົ້າ ຈະຍົກຕົວຢ່າງ ຜູ້ປະກອບການກິດຈະການໂຮງແຮມທີ່ໄດ້ເກັບກຳຮວບຮວມຂໍ້ມູນສ່ວນບຸກຄົນຂອງລູກຄ້າ. ຖ້າວ່າອີງໃສ່ການຕີຄວາມໝາຍຕາມ ກົດໝາຍຢ່າງເຄັ່ງຄັດ, ອາດຈະຖືວ່າ ຜູ້ປະກອບການໂຮງແຮມ ເປັນ ເຈົ້າຂອງຂໍ້ມູນ, ເນື່ອງຈາກວ່າ ພວກເຂົາ ເປັນຜູ້ຄອບຄອງຂໍ້ມູນດັ່ງກ່າວ. ນີ້ອາດຈະເຮັດໃຫ້ເກີດຄວາມສັບສົນໃນປະເດັນທີ່ວ່າ ແມ່ນໃຜກັນແທ້ ທີ່ໄດ້ຮັບຜົນປະໂຫຍດຈາກການປົກປ້ອງ ທີ່ກົດໝາຍກຳນົດໄວ້ສຳລັບ ເຈົ້າຂອງຂໍ້ມູນ.

ພວກຂ້າພະເຈົ້າເຂົ້າໃຈວ່າຜູ້ອອກກົດໝາຍບໍ່ໄດ້ຕັ້ງໃຈໃຫ້ຄຳວ່າ "ເຈົ້າຂອງຂໍ້ມູນ" ຖືກຕີຄວາມໝາຍກວ້າງແບບນັ້ນ. ດ້ວຍເຫດຜົນນີ້, ຈຶ່ງຄວນຈະມີການອະທິບາຍຊີ້ແຈ້ງ ຄຳນິຍາມທີ່ມີປະຈຸບັນ ເພື່ອໃຫ້ເຫັນຄວາມແຕກຕ່າງຢ່າງຊັດເຈນ ລະຫວ່າງ ນິຕິບຸກຄົນທີ່ຮວບຮວມ ແລະ ເກັບກຳຂໍ້ມູນ (ເຊັ່ນ ຜູ້ປະກອບການໂຮງແຮມ ໃນຕົວຢ່າງຂ້າງເທິງ) ແລະ ບຸກຄົນທີ່ສາມາດຖືກລະບຸຕົວຕົນໄດ້ດ້ວຍຂໍ້ມູນດັ່ງກ່າວ (ເຊັ່ນ: ລູກຄ້າ ໃນຕົວຢ່າງຂ້າງເທິງ).

### 4.2. ນິຍາມຂອງຄຳວ່າ "ຜູ້ຄຸ້ມຄອງຂໍ້ມູນ" ບໍ່ຈະແຈ້ງ ແລະ ມີຄວາມໝາຍກວ້າງເກີນໄປ.

ດັ່ງທີ່ກ່າວມາຂ້າງເທິງ, ກົດໝາຍ ວ່າດ້ວຍ ການຄຸ້ມຄອງຂໍ້ມູນເອເລັກໂຕຣນິກ ໄດ້ກ່າວເຖິງ ຜູ້ຄຸ້ມຄອງຂໍ້ມູນ, ຊຶ່ງຄຳສັບດັ່ງກ່າວມີຄວາມໝາຍໃກ້ຄຽງທີ່ສຸດກັບຄຳວ່າ ຜູ້ປະມວນຂໍ້ມູນ ໃນລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR). ກົດໝາຍໄດ້ນິຍາມຄຳວ່າ ຜູ້ຄຸ້ມຄອງຂໍ້ມູນ ວ່າແມ່ນ "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີໜ້າທີ່ຄຸ້ມຄອງຂໍ້ມູນເອເລັກໂຕຣນິກ ເປັນຕົ້ນ ກະຊວງ, ສູນຂໍ້ມູນຜ່ານອິນເຕີເນັດ, ຜູ້ໃຫ້ບໍລິການໂທລະຄົມມະນາຄົມ, ຜູ້ໃຫ້ບໍລິການອິນເຕີເນັດ, ທະນາຄານ" (ມາດຕາ 3, ຂໍ້ 14). ກົດໝາຍໄດ້ກຳນົດພັນທະຈຳນວນໜຶ່ງທີ່ຜູ້ຄຸ້ມຄອງຂໍ້ມູນຈະຕ້ອງປະຕິບັດ. ດັ່ງນັ້ນ, ຄວາມສາມາດໃນການລະບຸບັນດານິຕິບຸກຄົນທີ່ນອນຢູ່ໃນຄຳນິຍາມດັ່ງກ່າວນີ້ຈຶ່ງມີຄວາມສຳຄັນ.

ໃນຄຳນິຍາມດັ່ງກ່າວນີ້, ຜູ້ຄຸ້ມຄອງຂໍ້ມູນ ແມ່ນບຸກຄົນທີ່ມີ "ໜ້າທີ່" ໃນການຄຸ້ມຄອງຂໍ້ມູນເອເລັກໂຕຣນິກ. ເຖິງແມ່ນວ່ານິຍາມຄຳສັບດັ່ງກ່າວບໍ່ຈະແຈ້ງ, ແຕ່ກໍບໍ່ຈຳກັດສະເພາະນິຕິບຸກຄົນທີ່ຄຸ້ມຄອງຂໍ້ມູນແທນຜູ້ອື່ນ.

ຄຳວ່າ "ເປັນຕົ້ນ" ໃນຄຳນິຍາມດັ່ງກ່າວບົ່ງຊີ້ໃຫ້ເຫັນວ່າ ມັນບໍ່ໄດ້ຈຳກັດສະເພາະບັນດາພາກສ່ວນທີ່ໄດ້ກ່າວມາເທົ່ານັ້ນ. ຜູ້ອອກກົດໝາຍມີຄວາມຕັ້ງໃຈຢາກອະທິບາຍຊີ້ແຈງຄຳນິຍາມດັ່ງກ່າວດ້ວຍການຍົກຕົວຢ່າງໃຫ້ເຫັນໃນກົດໝາຍ. ເຖິງຢ່າງໃດກໍຕາມ, ບັນດາຕົວຢ່າງເຫຼົ່ານີ້ບໍ່ສາມາດໃຫ້ຄວາມຊັດເຈນໄດ້ວ່າບັນດານິຕິບຸກຄົນທີ່ໄດ້ຖືກລະບຸຊື່ໃນທີ່ນັ້ນ ມີຄວາມແຕກຕ່າງກັນທາງດ້ານອົງກອນ ຫຼື ບໍ່ ແລະ ໃນບາງກໍລະນີບໍ່ໄດ້ຖືກຮັບຮູ້ວ່າເປັນ ຜູ້ຄຸ້ມຄອງຂໍ້ມູນເລີຍ. ຍົກຕົວຢ່າງ ບັນດາກະຊວງ, ຊຶ່ງນອນຢູ່ໃນລາຍຊື່ຈະດຳເນີນການປະມວນ "ຂໍ້ມູນຕ້ອງຫ້າມ" ຢ່າງເປັນປະຈຳ, ທີ່ພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ຄຸ້ມຄອງດ້ວຍການນຳໃຊ້ເຄື່ອງມືເອເລັກໂຕຣນິກຖ້າພວກເຂົາເປັນຜູ້ຄຸ້ມຄອງຂໍ້ມູນ.

ອີງຕາມບັນດາຕົວຢ່າງທີ່ກຳນົດຢູ່ໃນກົດໝາຍ ແນະນຳວ່າ ຜູ້ຄຸ້ມຄອງຂໍ້ມູນ ແມ່ນໜ່ວຍງານທີ່ຄຸ້ມຄອງຂໍ້ມູນສະເພາະເປັນຈຳນວນຫຼາຍ. ຄຳຖາມກໍ່ຄື ຈະຖືວ່າ ບໍລິສັດປະກັນໄພ ແລະ ໂຮງໝໍ ເປັນ ຜູ້ຄຸ້ມຄອງຂໍ້ມູນ ຄືກັບພາກສ່ວນອື່ນ ຫຼື ບໍ່.

ນອກຈາກຕົວຢ່າງເຫຼົ່ານີ້ ແລະ ນິຍາມທີ່ໄດ້ກຳນົດໄວ້ນັ້ນ, ຍັງບໍ່ທັນມີຄຳແນະນຳຢ່າງເປັນທາງການສຳລັບການລະບຸ ຜູ້ຄຸ້ມຄອງຂໍ້ມູນ. ໃນທີ່ສຸດມັນກໍຂຶ້ນກັບການຕີຄວາມໝາຍຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ຄຳນິຍາມທີ່ບໍ່ຊັດເຈນ ເຮັດໃຫ້ຄວາມແນ່ນອນທາງກົດໝາຍໃນການລະບຸຕົວຕົນຜູ້ຄຸ້ມຄອງຂໍ້ມູນຫຼຸດລົງ.

### 4.3. ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ຍັງບໍ່ທັນໄດ້ກຳນົດສະຖານະທາງກົດໝາຍ ຂອງ ບັນດາຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງ.

ໃນ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ຍັງບໍ່ທັນມີຄວາມແນ່ນອນກ່ຽວກັບສິດ ແລະ ພັນທະ ຂອງຜູ້ທີ່ຖືວ່າບໍ່ແມ່ນເຈົ້າຂອງຂໍ້ມູນ ຫຼື ຜູ້ຄຸ້ມຄອງຂໍ້ມູນ.

ໃນຕົວຢ່າງທີ່ໄດ້ຍົກຂຶ້ນມາຂ້າງເທິງໃນຂໍ້ 4.1, ພວກເຮົາຈະສັງເກດເຫັນວ່າ ຜູ້ປະກອບການໂຮງແຮມ ອາດຈະນອນຢູ່ໃນຂອບເຂດຂອງຄຳນິຍາມຂອງຄຳວ່າ ເຈົ້າຂອງຂໍ້ມູນ. ແຕ່ມັນ ຍັງບໍ່ທັນມີຄວາມແນ່ນອນເທື່ອວ່າ ຜູ້ປະກອບການໂຮງແຮມ ຈະນອນຢູ່ໃນຂອບເຂດຂອງຄຳ ນິຍາມ ຂອງຄຳ

ວ່າ ຜູ້ຄຸ້ມຄອງຂໍ້ມູນ ຫຼື ບໍ່. ນີ້ອາດນໍາໄປສູ່ສະຖານະທີ່ ຜູ້ປະກອບການໂຮງແຮມ ມີສິດທີ່ຈະເປັນເຈົ້າຂອງຂໍ້ມູນ, ແຕ່ບໍ່ມີພັນທະທີ່ເປັນ ຜູ້ຄຸ້ມຄອງຂໍ້ມູນ. ຜູ້ປະກອບການໂຮງແຮມ ຈະໄດ້ຮັບການຍົກເວັ້ນຈາກການປະຕິບັດຕາມຂໍ້ກໍານົດທີ່ຄວບຄຸມການເກັບ, ການນໍາໃຊ້, ການໂອນ ແລະ ການເຜີຍແຜ່ຂໍ້ມູນເອເລັກໂຕຣນິກ. ນອກຈາກນັ້ນ, ຜູ້ປະກອບການໂຮງແຮມ ອາດຈະໄດ້ຮັບການຍົກເວັ້ນຈາກ ຂໍ້ຈໍາກັດໃນການຄຸ້ມຄອງຂໍ້ມູນສະເພາະ ແລະ ຂໍ້ມູນຕ້ອງຫ້າມ. ຖ້າບໍ່ມີນິຍາມທີ່ຈະແຈ້ງກວ່າເກົ່າ ແລະ ບໍ່ມີການຮັບຮູ້ກ່ຽວກັບຄວາມຫຼາກຫຼາຍ ຂອງຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນຂະບວນການຄຸ້ມຄອງຂໍ້ມູນ (ເຊັ່ນ ປະເພດ "ຜູ້ຄວບຄຸມຂໍ້ມູນ" ແລະ "ຜູ້ປະມວນຜົນ" ທີ່ກໍານົດໄວ້ໃນ ລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປ ຂອງ ສະຫະພາບເອີຣົບ (GDPR)) ຈະເຮັດໃຫ້ການປົກປ້ອງຂໍ້ມູນເອເລັກໂຕຣນິກບໍ່ສາມາດຮັບປະກັນໄດ້ ເພາະວ່າອາດຈະມີຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງອື່ນໆ ທີ່ຍັງບໍ່ທັນມີພັນທະຜູກພັນທາງດ້ານກົດໝາຍ.

## 4.4. ກົດໝາຍຍັງບໍ່ມີຄໍານິຍາມ ຂອງ ຄໍາວ່າ "ຂໍ້ມູນທົ່ວໄປ" ແລະ "ຂໍ້ມູນສ່ວນບຸກຄົນ" ທີ່ຈະແຈ້ງ ແລະ ຊັດເຈນ, ດັ່ງນັ້ນມັນຈຶ່ງເຮັດໃຫ້ເກີດຄວາມສົງໄສກ່ຽວກັບການຈັດປະເພດຂອງຂໍ້ມູນສ່ວນບຸກຄົນ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ກໍານົດໄວ້ວ່າ ຂໍ້ມູນທົ່ວໄປ ແມ່ນຂໍ້ມູນທີ່ກ່ຽວຂ້ອງກັບ "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງສາມາດເຂົ້າເຖິງ, ນໍາໃຊ້ ແລະ ເປີດເຜີຍໄດ້ ແຕ່ຕ້ອງບອກແຫຼ່ງຂໍ້ມູນທີ່ໄດ້ມາໃຫ້ຖືກຕ້ອງ" (ມາດຕາ 9). ບັນດາຕົວຢ່າງທີ່ກໍານົດໃນຄໍາແນະນໍາປະກອບມີ: "ຊື່, ຕໍາແໜ່ງ ທີ່ຢູ່, ໝາຍເລກໂທລະສັບ, ທີ່ຢູ່ທາງຈົດໝາຍເອເລັກໂຕຣນິກ, ຂໍ້ມູນຂອງການຈັດຕັ້ງ, ສະຖິຕິທົ່ວໄປ, ບົດຄວາມເຜີຍແຜ່ທາງດ້ານວິຊາການ ແລະ ອື່ນໆ" (ຂໍ້ 2).

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ລະບຸໄວ້ວ່າ "ຂໍ້ມູນສ່ວນບຸກຄົນ ໝາຍເຖິງ ຂໍ້ມູນເອເລັກໂຕຣນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ" (ມາດຕາ 3 ຂໍ້ 12). ຂໍ້ມູນສ່ວນບຸກຄົນອາດຈະນອນຢູ່ໃນຂອບເຂດນິຍາມຂອງຄໍາວ່າ "ຂໍ້ມູນທົ່ວໄປ", "ຂໍ້ມູນສະເພາະ" ຫຼື "ຂໍ້ມູນຕ້ອງຫ້າມ" ໂດຍອີງຕາມລັກສະນະຂອງມັນ.

ດັ່ງນັ້ນ, ນອກຈາກຕົວຢ່າງທີ່ໄດ້ກໍານົດໄວ້ໃນຄໍາແນະນໍາຈຶ່ງເປັນການຍາກທີ່ຈະລະບຸວ່າ "ຂໍ້ມູນສ່ວນບຸກຄົນ" ປະເພດໃດທີ່ຖືວ່າເປັນ "ຂໍ້ມູນທົ່ວໄປ" ຈະຕ້ອງປຶກສາຫາລືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອຂໍຄໍາແນະນໍາສໍາລັບຂໍ້ມູນທີ່ບໍ່ໄດ້ລະບຸໄວ້ຢ່າງຊັດເຈນຢູ່ໃນຄໍາແນະນໍາ. ແນ່ນອນວ່າ ຖ້າຈະຕ້ອງອີງໃສ່ດຸນພິນິດການຕັດສິນໃຈຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງກ່ຽວກັບເລື່ອງດັ່ງກ່າວນີ້ ມັນຈະເຮັດໃຫ້ຄວາມເຊື່ອໝັ້ນຕໍ່ກົດໝາຍຫຼຸດລົງ.

## 4.5. ກົດໝາຍກໍານົດຄໍານິຍາມ ຂອງ ຄໍາວ່າ "ຂໍ້ມູນສະເພາະ" ຍັງບໍ່ທັນພຽງພໍ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ກໍານົດໄວ້ວ່າ "ຂໍ້ມູນສະເພາະ" ແມ່ນ "ຂໍ້ມູນທີ່ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າເຖິງ, ນໍາໃຊ້ ຫຼື ເປີດເຜີຍ ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ" (ມາດຕາ 10). ບັນດາຕົວຢ່າງທີ່ກໍານົດໄວ້ຢູ່ໃນຄໍາແນະນໍາປະກອບມີ: "ຂໍ້ມູນຂອງລູກຄ້າ, ຂໍ້ມູນທາງການເງິນ, ຊີວະປະຫວັດສ່ວນຕົວ, ປະຫວັດການປິ່ນປົວສຸຂະພາບ, ເຊື້ອຊາດ, ສາສະໜາ, ແຜນໂຄງການ, ແຜນງົບປະມານ, ຄວາມລັບທາງລັດຖະການ ແລະ ອື່ນໆ" (ຂໍ້ 3). ເຊັ່ນດຽວກັບ ຂໍ້ມູນທົ່ວໄປ, ຄໍານິຍາມຂອງ ຂໍ້ມູນສະເພາະທີ່ຖືກກໍານົດໄວ້ໃນກົດໝາຍບໍ່ໄດ້ເວົ້າເຖິງຄຸນສົມບັດ ຫຼື ລັກສະນະຂອງຂໍ້ມູນ. ດັ່ງນັ້ນ, ນອກຈາກບັນດາຕົວຢ່າງທີ່ໄດ້ລະບຸໃນຄໍາແນະນໍາມັນເປັນການຍາກທີ່ຈະລະບຸຂໍ້ມູນທີ່ອາດຖືວ່າເປັນຂໍ້ມູນສະເພາະ.

ດ້ວຍເຫດນີ້, ຈະຕ້ອງມີການປຶກສາຫາລືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອຂໍຄໍາແນະນໍາສໍາລັບຂໍ້ມູນທີ່ບໍ່ໄດ້ຖືກຍົກຕົວຢ່າງໃນຄໍາແນະນໍາ. ໃນກໍລະນີນີ້, ຄວາມແນ່ນອນທາງດ້ານກົດໝາຍມີຄວາມສໍາຄັນ, ເນື່ອງຈາກວ່າ ຂໍ້ມູນສະເພາະ ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກເຈົ້າຂອງຂໍ້ມູນກ່ອນທີ່ມັນຈະຖືກນໍາໄປຄຸ້ມຄອງ ໂດຍຜູ້ຄຸ້ມຄອງຂໍ້ມູນ. ດັ່ງນັ້ນ, ມັນຈຶ່ງມີຄວາມຈໍາເປັນທີ່ບັນຫານີ້ຕ້ອງໄດ້ຮັບການຊີ້ແຈງເພື່ອເຮັດໃຫ້ນິຕິບຸກຄົນທີ່ກ່ຽວຂ້ອງສາມາດດໍາເນີນການຕາມຂັ້ນຕອນທີ່ເໝາະສົມກ່ອນການເກັບກໍາຂໍ້ມູນປະເພດນີ້.

## 4.6. ບັນຫາເລື່ອງຄວາມບໍ່ຊັດເຈນ ທີ່ວ່າ ຈໍາເປັນ ຫຼື ບໍ່ ທີ່ຈະຕ້ອງໄດ້ຮັບຄວາມຍິນຍອມໃນການເກັບຮວບຮວມ ແລະ ຖ່າຍໂອນຂໍ້ມູນທົ່ວໄປ.

ຂໍ້ມູນທົ່ວໄປ ແມ່ນຂໍ້ມູນທີ່ສາມາດ "ເຂົ້າເຖິງ, ນໍາໃຊ້ ແລະ ເຜີຍແຜ່ໄດ້" ໂດຍບໍ່ຈໍາເປັນຕ້ອງໄດ້ຮັບຄວາມເຫັນດີຈາກ ເຈົ້າຂອງຂໍ້ມູນ. ໃນຄໍາແນະນໍາ ຄໍາວ່າ "ການເຂົ້າເຖິງ" ໄດ້ຖືກນິຍາມວ່າແມ່ນ "ການເຂົ້າເຖິງຂໍ້ມູນທົ່ວໄປ ແລະ ຂໍ້ມູນສະເພາະເພື່ອນໍາໃຊ້ ແລະ ເຜີຍແຜ່ [ຂໍ້ມູນ]" ອີງຕາມເຫດຜົນໃນການຮ້ອງຂໍການເຂົ້າເຖິງ (ຂໍ້ 11). ການນໍາໃຊ້ ແລະ ການເຜີຍແຜ່ໝາຍເຖິງ "ການນໍາເອົາຂໍ້ມູນອອກມາ" ແລະ ເຜີຍແຜ່ ຕໍ່ບຸກຄົນທີສາມ, ຖ້າວ່າຈຸດປະສົງໃນການເຜີຍແຜ່ຂໍ້ມູນສອດຄ່ອງກັບຈຸດປະສົງໃນການເຂົ້າເຖິງ, ເຊັ່ນ: ເພື່ອຈຸດປະສົງທາງການຕະຫຼາດເປັນຕົ້ນ (ຂໍ້ 9 ຂອງຄໍາແນະນໍາ).

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ກໍານົດໄວ້ວ່າ "ການເກັບກໍາຂໍ້ມູນ ຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງຂໍ້ມູນ" (ມາດຕາ 12). ຄວາມໝາຍ ຂອງ ການເກັບກໍາຂໍ້ມູນ ໄດ້ຖືກກໍານົດໄວ້ໃນ ຄໍາແນະນໍາວ່າ "ການເກັບກໍາຂໍ້ມູນ ແມ່ນ ການຮວບຮວມຂໍ້ມູນໄວ້ໃນຄັງຂໍ້ມູນ ຫຼື ຖານຂໍ້ມູນ ເພື່ອສະດວກໃນການເຂົ້າເຖິງ, ກວດກາ ແລະ ນໍາໃຊ້..." (ຂໍ້ 5).

ດັ່ງນັ້ນ, ເຖິງແມ່ນວ່າການເຂົ້າເຖິງ, ນຳໃຊ້ ແລະ ເຜີຍແຜ່ຂໍ້ມູນທົ່ວໄປ ຈະບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງຂໍ້ມູນ, ແຕ່ການອະນຸຍາດຈາກເຈົ້າຂອງຂໍ້ມູນ ແມ່ນຈຳເປັນສຳລັບ "ການເກັບກຳ" ຂໍ້ມູນ. ທ້າຍສຸດແລ້ວ, ການຂໍອະນຸຍາດຈາກເຈົ້າຂອງຂໍ້ມູນ ແມ່ນມີຄວາມຈຳເປັນໃນເກືອບທຸກກໍລະນີ, ເນື່ອງຈາກວ່າ, ໃນທາງປະຕິບັດ, ການຮວບຮວມຂໍ້ມູນ ແມ່ນສິ່ງທີ່ຈະຕ້ອງໄດ້ເຮັດກ່ອນໝູ່ກ່ອນທີ່ຈະເຂົ້າເຖິງ, ນຳໃຊ້ ແລະ ເຜີຍແຜ່.

ໃນລັກສະນະດຽວກັນ, ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ກຳນົດວ່າ ຈະສາມາດໂອນ ຂໍ້ມູນ (ບໍ່ກ່ຽວວ່າຈະເປັນຂໍ້ມູນປະເພດໃດ) ໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນເທົ່ານັ້ນ ແລະ ຖ້າຫາກ ສາມາດຮັບປະກັນໄດ້ວ່າ ຜູ້ຮັບສາມາດປົກປ້ອງຂໍ້ມູນນັ້ນໄດ້ (ມາດຕາ 17). ນອກຈາກນັ້ນ, ມັນຍັງບໍ່ທັນຈະແຈ້ງເທື່ອວ່າ ການໂອນຂໍ້ມູນ ຊຶ່ງຈຳເປັນຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ແລະ ການເຜີຍແຜ່ ຊຶ່ງສາມາດເຮັດໄດ້ໂດຍບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ແມ່ນມີຄວາມແຕກຕ່າງກັນແນວໃດ.

ໂດຍລວມແລ້ວ, ການນຳໃຊ້ ຂໍ້ມູນທົ່ວໄປ ໂດຍບຸກຄົນທີສາມ ຖືວ່າຍັງຈຳກັດ.

## 4.7. ບາງຂໍ້ມູນສາມາດຖືກຈັດປະເພດ ເປັນຫຼາຍກວ່າໜຶ່ງປະເພດ.

ໃນຂະນະທີ່ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແບ່ງຂໍ້ມູນອອກເປັນສາມປະເພດ, ບາງຂໍ້ມູນສາມາດຖືກຈັດປະເພດເປັນຫຼາຍກວ່າໜຶ່ງປະເພດ.

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ຂໍ້ມູນສະເພາະ ປະກອບມີ "ຂໍ້ມູນຂອງລູກຄ້າ, ຂໍ້ມູນທາງການເງິນ, ຊີວະປະຫວັດສ່ວນຕົວ, ປະຫວັດການປິ່ນປົວສຸຂະພາບ, ເຊື້ອຊາດ, ສາສະໜາ, ແຜນໂຄງການ, ແຜນງົບປະມານ, ຄວາມລັບທາງລັດຖະການ ແລະ ອື່ນໆ." (ຂໍ້ 3 ຂອງຄຳແນະນຳ).

ພາຍໃຕ້ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ຂໍ້ມູນຕ້ອງຫ້າມ ປະກອບມີຂໍ້ມູນທີ່ກ່ຽວຂ້ອງກັບ "ເຊື້ອຊາດ, ຊົນເຜົ່າ, ຄວາມຄິດເຫັນທາງການເມືອງ, ຄວາມເຊື່ອຖືທາງສາສະໜາ, ພຶດຕິກຳທາງເພດ, ປະຫວັດອາຊະຍາກຳ, ຂໍ້ມູນສຸຂະພາບ ຫຼື ຂໍ້ມູນອື່ນ ຊຶ່ງສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ" (ມາດຕາ 33, ຂໍ້ 3).

ຄຳວ່າ "ເຊື້ອຊາດ" ໄດ້ຖືກກ່າວເຖິງຢ່າງຈະແຈ້ງທັງໃນ ຄຳນິຍາມ ຂອງ ຂໍ້ມູນສະເພາະ ແລະ ຄຳນິຍາມຂອງຂໍ້ມູນຕ້ອງຫ້າມ. ນອກຈາກນັ້ນ, ມັນຍັງບໍ່ທັນຈະແຈ້ງເທື່ອວ່າ ຄຳວ່າ "ສາສະໜາ" (ໃນຄຳນິຍາມຂອງຂໍ້ມູນສະເພາະ) ກັບ ຄຳວ່າ "ຄວາມເຊື່ອທາງສາສະໜາ" (ໃນຄຳນິຍາມຂອງຂໍ້ມູນຕ້ອງຫ້າມ) ມີຄວາມແຕກຕ່າງກັນຄືແນວໃດ.

ຍິ່ງໄປກວ່ານັ້ນ, ໃນຄຳແນະນຳດັ່ງກ່າວ ປະຫວັດການປິ່ນປົວສຸຂະພາບ ໄດ້ຖືກກຳນົດວ່າເປັນ ຂໍ້ມູນສະເພາະ, ແຕ່ວ່າໃນ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ຂໍ້ມູນດ້ານສຸຂະພາບ ພັດຖືກກຳນົດວ່າເປັນ ຂໍ້ມູນຕ້ອງຫ້າມ. ຄວາມຈະແຈ້ງໃນເລື່ອງດັ່ງກ່າວນີ້ແມ່ນມີຄວາມສຳຄັນ ເນື່ອງຈາກວ່າ ຂໍ້ມູນດ້ານສຸຂະພາບ ເປັນຂໍ້ມູນທີ່ໄດ້ຮັບການຄຸ້ມຄອງໂດຍບັນດາຜູ້ປະກອບການໃນຫຼາຍຂະແໜງການຢ່າງເປັນປະຈຳ, ຊຶ່ງ ຈະເຮັດໃຫ້ມີຄວາມສ່ຽງຍ້ອນວ່າ ຖ້າຫາກກົດໝາຍຄວບຄຸມຫຼາຍຈົນເກີນໄປ ມັນອາດຈະສົ່ງຜົນສະທ້ອນທີ່ຮ້າຍແຮງໃນພາກປະຕິບັດຕົວຈິງ.

## 4.8. ຄຳນິຍາມຂອງຂໍ້ມູນຕ້ອງຫ້າມ ກວ້າງຈົນເກີນໄປ ແລະ ອາດເປັນການຂັດຂວາງບໍ່ໃຫ້ຜູ້ປະກອບການເອກະຊົນສາມາດໃຊ້ຂໍ້ມູນເຂົ້າໃນການດຳເນີນງານພາຍໃນຂອງຕົນ ແລະ ພັດທະນາກິດຈະກຳທາງທຸລະກິດທີ່ອາໄສຂໍ້ມູນເອເລັກໂຕຣນິກໄດ້ຢ່າງມີປະສິດທິພາບ.

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ກຳນົດໃຫ້ຂໍ້ມູນບາງປະເພດບໍ່ສາມາດຄຸ້ມຄອງໄດ້, ເຖິງແມ່ນວ່າຈະໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນກໍຕາມ, ຊຶ່ງໃນນັ້ນ, ປະກອບດ້ວຍຂໍ້ມູນທີ່ກ່ຽວກັບ:

- ເຊື້ອຊາດ;
- ຊົນເຜົ່າ;
- ຄວາມຄິດເຫັນທາງການເມືອງ;
- ຄວາມເຊື່ອທາງສາສະໜາ;
- ການປະພຶດທາງເພດ;
- ປະຫວັດອາຊະຍາກຳ;
- ຂໍ້ມູນດ້ານສຸຂະພາບ;
- ຂໍ້ມູນອື່ນໆຊຶ່ງສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ການນຳເອົາ ຂໍ້ມູນດ້ານສຸຂະພາບ ໄປລວມໃສ່ໃນໝວດ ຂໍ້ມູນຕ້ອງຫ້າມ ເປັນເລື່ອງທີ່ໜ້າເສຍດາຍເພາະວ່າຈະເປັນການກີດກັ້ນເຮັດໃຫ້ ບັນດາທຸລະກິດ ທີ່ອາດຖືວ່າເປັນ ຜູ້ຄຸ້ມຄອງຂໍ້ມູນ ຫຼື ບັນດາທຸລະກິດທີ່ອາໄສການບໍລິການ ຂອງ ຜູ້ຄຸ້ມຄອງຂໍ້ມູນ ບໍ່ສາມາດບໍລິຫານ ຊັບພະຍາກອນ

ມະນຸດໄດ້ຢ່າງມີປະສິດທິພາບ. ອຸປະກອນເອເລັກໂຕຣນິກ ຫຼື ແອບພລິເຄຊັນທາງໂທລະສັບ ໃນອະນາຄົດ ທີ່ສ້າງຂຶ້ນມາເພື່ອຮັບໃຊ້ທາງດ້ານສຸຂະພາບ (ເຊັ່ນ: Telehealth) ທີ່ອາໄສການຖ່າຍໂອນ ຂໍ້ມູນດ້ານສຸຂະພາບທາງເອເລັກໂຕຣນິກ ອາດຈະລະເມີດກົດໝາຍ. ໃນລັກສະນະດຽວກັນ, ມັນຈະເຮັດໃຫ້ບໍ່ສາມາດລົງທະບຽນຂໍ້ມູນຂອງພະນັກງານທີ່ເສຍອີງຄະຂອງບໍລິສັດໃດໜຶ່ງ ແບບດິຈິຕອລດ້ວຍການໃຊ້ເຄື່ອງມືເອເລັກໂຕຣນິກໄດ້, ຊຶ່ງຈະເຮັດໃຫ້ຂັ້ນຕອນການຈ້າງງານຂອງບໍລິສັດ ມີຄວາມຫຍຸ້ງຍາກ ແລະ ເຮັດໃຫ້ພະນັກງານຂອງບໍລິສັດບໍ່ມີຄວາມຫຼາກຫຼາຍ. ສິ່ງດັ່ງກ່າວນີ້ຈະສົ່ງຜົນກະທົບອັນໃຫຍ່ຫຼວງເຮັດໃຫ້ຜູ້ໃຊ້ແຮງງານມີຄວາມຫຍຸ້ງຍາກໃນການບັນທຶກຂໍ້ມູນຂອງພະນັກງານຂອງຕົນເອງ, ຊຶ່ງປັດຈຸບັນແມ່ນນິຍົມເຮັດກັນໃນຮູບແບບເອເລັກໂຕຣນິກ.

ໃນລັກສະນະດຽວກັນ, ບໍລິສັດຕ່າງໆ ມັກອາໄສຂໍ້ມູນເອເລັກໂຕຣນິກ ເພື່ອສອບຖາມກ່ຽວກັບປະຫວັດອາຊະຍາກຳຂອງພະນັກງານໃໝ່.

### 4.9. ບັນດາກະຊວງຕ່າງໆຢູ່ໃນປະເທດລາວໄດ້ຖືກກຳນົດໃຫ້ເປັນຜູ້ຄຸ້ມຄອງຂໍ້ມູນ, ຊຶ່ງເຮັດໃຫ້ເກີດມີຄຳຖາມທີ່ວ່າ ບັນດາກະຊວງດັ່ງກ່າວສາມາດຄຸ້ມຄອງຂໍ້ມູນຂອງພົນລະເມືອງໄດ້ແທ້ ຫຼື ບໍ່

ໃນຂະນະທີ່ນິຍາມຂອງຄຳທີ່ວ່າ "ຜູ້ຄຸ້ມຄອງຂໍ້ມູນ" ຍັງມີລັກສະນະຄຸມເຄືອ ແລະ ບໍ່ຊັດເຈນ, ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ພັດກຳນົດໄວ້ຢ່າງຊັດເຈນວ່າ ບັນດາກະຊວງ ເປັນ "ຜູ້ຄຸ້ມຄອງຂໍ້ມູນ". ແຕ່ວ່າ, ບັນດາກະຊວງດັ່ງກ່າວ ພັດຖືກຫ້າມບໍ່ໃຫ້ຄຸ້ມຄອງຂໍ້ມູນຕ້ອງຫ້າມດ້ວຍການໃຊ້ເຄື່ອງມືເອເລັກໂຕຣນິກ (ກະລຸນາເບິ່ງຂໍ້ 4.8 ຂ້າງເທິງ).

ອີກໜຶ່ງຕົວຢ່າງແມ່ນ, ຖ້າອ່ານຕາມເນື້ອໃນທີ່ກຳນົດໄວ້ໃນກົດໝາຍ, ມັນຈະເປັນການລະເມີດກົດໝາຍ ຖ້າ ກະຊວງປ້ອງກັນຄວາມສະຫງົບ ຮວບຮວມ ແລະ ເກັບຮັກສາ ປະຫວັດອາຊະຍາກຳຂອງພົນລະເມືອງ ດ້ວຍເຄື່ອງມືເອເລັກໂຕຣນິກ. ໃນລັກສະນະດຽວກັນ, ຈະບໍ່ມີກະຊວງໃດສາມາດຄຸ້ມຄອງຂໍ້ມູນຕ້ອງຫ້າມທີ່ໄດ້ກຳນົດໄວ້ຂ້າງເທິງດ້ວຍເຄື່ອງມືເອເລັກໂຕຣນິກ.

## 5. ຄຳແນະນຳ:

### 5.1. ນິຍາມຂອງຄຳວ່າ "ຂໍ້ມູນສ່ວນບຸກຄົນ", "ເຈົ້າຂອງຂໍ້ມູນ" ແລະ "ຜູ້ຄຸ້ມຄອງຂໍ້ມູນ" ຄວນຈະໄດ້ຮັບການດັດແກ້ ແລະ ສິດ ແລະ ພັນທະ ຂອງ ເຈົ້າຂອງຂໍ້ມູນ ແລະ ຜູ້ຄຸ້ມຄອງຂໍ້ມູນ ຄວນໄດ້ຮັບການລະບຸໄວ້ຢ່າງຈະແຈ້ງ ແລະ ຊັດເຈນ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ສາມາດເອົາຂໍ້ກຳນົດຂອງລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປ ຂອງສະຫະພາບເອີຣົບ (GDPR) ມາເປັນຕົວແບບ, ເນື່ອງຈາກວ່າພວກມັນເປັນຂໍ້ກຳນົດຕົວແບບລະດັບໂລກຂອງກົດໝາຍໃນຂົງເຂດດັ່ງກ່າວນີ້.

<u>ຂໍ້ມູນສ່ວນບຸກຄົນ ແລະ ເຈົ້າຂອງຂໍ້ມູນ</u>

ນິຍາມຂອງຄຳວ່າ "ຂໍ້ມູນສ່ວນບຸກຄົນ" ຍັງບໍ່ທັນເປັນທີ່ໜ້າເພິ່ງພໍໃຈ ເນື່ອງຈາກມັນຍັງບໍ່ທັນໄດ້ກ່າວເຖິງຄຸນສົມບັດ ຫຼື ລັກສະນະຂອງຂໍ້ມູນ. ນອກຈາກນັ້ນ, ເພື່ອສ້າງກອບການປົກປ້ອງທີ່ຮອບດ້ານ ແລະ ທີ່ເປັນອັນສະເພາະ ສຳລັບ ຂໍ້ມູນທີ່ກ່ຽວກັບບຸກຄົນ, ນິຍາມຂອງຄຳວ່າ "ຂໍ້ມູນສ່ວນບຸກຄົນ" ບໍ່ຄວນກ່າວເຖິງຂໍ້ມູນທີ່ກ່ຽວຂ້ອງກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໂດຍລວມ. ຖ້າເຮັດຄືກັນກັບລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR), ຂໍ້ມູນສ່ວນບຸກຄົນຄວນຈະຖືກກຳນົດເປັນຂໍ້ມູນໃດກໍໄດ້ ທີ່ສາມາດລະບຸຕົວຕົນຂອງບຸກຄົນໃດໜຶ່ງໄດ້. ນິຍາມຂອງຄຳວ່າ "ເຈົ້າຂອງຂໍ້ມູນ" ກໍເຊັ່ນດຽວກັນ, ບໍ່ຄວນໝາຍເຖິງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງໂດຍລວມ. ເຈົ້າຂອງຂໍ້ມູນ ຄວນເປັນບຸກຄົນທີ່ສາມາດລະບຸຕົວຕົນໄດ້ຈາກຂໍ້ມູນສ່ວນບຸກຄົນດັ່ງກ່າວ, ໂດຍກຳນົດຄືກັນກັບນິຍາມຂອງຄຳວ່າ "ເຈົ້າຂອງຂໍ້ ມູນ" ໃນ ລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR). ຄຳນິຍາມບໍ່ຄວນກ່າວເຖິງຄວາມເປັນເຈົ້າຂອງຂໍ້ມູນ, ເນື່ອງຈາກວ່າມັນອາດສ້າງຄວາມບໍ່ແນ່ນອນທາງກົດໝາຍ ແລະ ອາດຈະເຮັດໃຫ້ສິ່ງທີ່ກົດໝາຍກຳນົດບໍ່ມີຄວາມສັກສິດເທົ່າທີ່ຄວນ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ຄວນອະທິບາຍເພີ່ມເຕີມກ່ຽວກັບຄວາມໝາຍຂອງຄຳວ່າ "ຜູ້ຄຸ້ມຄອງຂໍ້ມູນ" ໃຫ້ມີຄວາມຊັດເຈນຍິ່ງຂຶ້ນ, ໂດຍມຸ່ງເນັ້ນໄປທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຄຸ້ມຄອງຂໍ້ມູນສຳລັບ ຫຼື ໃນນາມ ບຸກຄົນ ຫຼື ນິຕິບຸກຄົນອື່ນ.

<u>ຜູ້ຄຸ້ມຄອງຂໍ້ມູນ</u>

ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກຄວນຊີ້ແຈງເພີ່ມເຕີມກ່ຽວກັບຄຳນິຍາມຂອງ "ຜູ້ຄຸ້ມຄອງຂໍ້ມູນ" ໃຫ້ຈະແຈ້ງຂຶ້ນຕື່ມ ໂດຍການກຳນົດເປົ້າໝາຍ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ຄຸ້ມຄອງຂໍ້ມູນສຳລັບ ຫຼື ໃນນາມຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ.
ດັ່ງທີ່ໄດ້ກ່າວມາແລ້ວຂ້າງເທິງ, ພາຍໃຕ້ ກົດໝາຍສະບັບປະຈຸບັນ, ມັນຍັງບໍ່ທັນມີຄວາມຊັດເຈນກ່ຽວກັບ ສິດ ແລະ ພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ໄດ້ຖືກກຳນົດວ່າເປັນ "ເຈົ້າຂອງຂໍ້ມູນ" ຫຼື "ຜູ້ຄຸ້ມຄອງຂໍ້ມູນ".

ໃນ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, ຜູ້ຄຸ້ມຄອງຂໍ້ມູນ ແມ່ນ "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໜ້າທີ່ຄຸ້ມຄອງຂໍ້ມູນ

ເອເລັກໂຕຣນິກ ເປັນຕົ້ນ ກະຊວງ, ສູນຂໍ້ມູນຜ່ານອິນເຕີເນັດ, ຜູ້ໃຫ້ບໍລິການໂທລະຄົມມະນາຄົມ, ຜູ້ໃຫ້ບໍລິການອິນເຕີເນັດ, ທະນາຄານ" (ມາດຕາ 3, ຂໍ້ 14). ອີງຕາມ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, "ການຄຸ້ມຄອງຂໍ້ມູນເອເລັກໂຕຣນິກ" ໝາຍເຖິງ "ການບໍລິຫານ ແລະ ການຈັດການຂໍ້ມູນ ຊຶ່ງລວມມີ ການເກັບ, ສຳເນົາ, ສົ່ງ, ຮັກສາ ແລະ ການທຳລາຍ ຂໍ້ມູນເອເລັກໂຕຣນິກ."

ຖ້າອ່ານຕາມເນື້ອໃນທີ່ກຳນົດໄວ້ໃນກົດໝາຍ, ພວກເຮົາຈະເຫັນວ່າ ມີພຽງແຕ່ນິຕິບຸກຄົນຈຳນວນໜ້ອຍດຽວເທົ່ານັ້ນທີ່ຖືກກຳນົດໃຫ້ເປັນ ຜູ້ຄຸ້ມຄອງຂໍ້ມູນ. ເບິ່ງຄືກັບວ່າກົດໝາຍກຳນົດໃຫ້ພຽງແຕ່ນິຕິບຸກຄົນເປັນຜູ້ຄຸ້ມຄອງຂໍ້ມູນສະເພາະ ແລະ ອາດມີຈຳນວນຫລວງຫຼາຍ, ຊຶ່ງເຫັນໄດ້ໃນລາຍຊື່ບັນດານິຕິບຸກຄົນ (ເຊັ່ນ ກະຊວງ, ສູນຂໍ້ມູນຜ່ານອິນເຕີເນັດ, ທະນາຄານ ແລະ ອື່ນໆ) ເທົ່ານັ້ນ. ນອກຈາກນັ້ນ, ພວກເຮົາຍັງສັງເກດເຫັນວ່າ ຜູ້ຄຸ້ມຄອງຂໍ້ມູນ ໄດ້ຖືກນິຍາມວ່າເປັນນິຕິບຸກຄົນໜຶ່ງທີ່ມີ "ໜ້າທີ່ຄຸ້ມຄອງຂໍ້ມູນເອເລັກໂຕຣນິກ", ແຕ່ມີຄວາມໝາຍແຄບກວ່ານິຍາມຂອງຄຳວ່າ "ຜູ້ຄວບຄຸມຂໍ້ມູນ" ໃນລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR) ທີ່ໄດ້ກວມເອົານິຕິບຸກຄົນທີ່ສາມາດ "ກຳນົດຈຸດປະສົງ ແລະ ວິທີການປະມວນຂໍ້ມູນສ່ວນຕົວບຸກຄົນ." ໃນຂະນະດຽວກັນກໍ່ເຫັນວ່າ ຄຳນິຍາມຂອງຄຳວ່າ "ຜູ້ຄຸ້ມຄອງຂໍ້ມູນ" ໃນ ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ອາດຈະມີຄວາມໝາຍໃກ້ຄຽງກັບຄຳນິຍາມຂອງຄຳວ່າ "ຜູ້ປະມວນຜົນຂໍ້ມູນ" ໃນລະບຽບ ການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR) ຊຶ່ງວ່າ ນິຕິບຸກຄົນມີການຄຸ້ມຄອງ (ຫຼື ປະມວນຜົນ) ຂໍ້ມູນໄດ້. ແນວໃດກໍ່ຕາມ, ທັງສອງເອກະສານນີ້ ກໍ່ບໍ່ມີຄວາມໝາຍຄືກັນໝົດທຸກຢ່າງ, ຕົວຢ່າງ: ຜູ້ຄຸ້ມຄອງຂໍ້ມູນໃນກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແມ່ນບໍ່ສາມາດປະມວນຂໍ້ມູນແທນຜູ້ອື່ນໄດ້.

ໃນດ້ານຕ່າງໆ, ມັນຍັງບໍ່ທັນມີຄວາມຊັດເຈນເທື່ອວ່າ ກົດໝາຍຈະຖືກຕີຄວາມໝາຍ ແລະ ນຳໃຊ້ຄືແນວໃດໃນພາກປະຕິບັດຕົວຈິງ ແລະ ມັນມີຄວາມເປັນໄປໄດ້ທີ່ວ່າມັນອາດຈະຖືກຕີຄວາມໝາຍອອກຢ່າງກວ້າງຂວາງ. ແນວໃດກໍ່ຕາມ ໂດຍອີງຕາມກົດໝາຍທີ່ໄດ້ຮ່າງຂື້ນ, ພວກຂ້າພະເຈົ້າເຊື່ອວ່າກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂທຣນິກຍັງບໍ່ມີ "ການເຊື່ອມຕໍ່ແບບຕ່ອງໂສ້" ຍ້ອນວ່າມັນບໍ່ຈຳແນກຄວາມແຕກຕ່າງລະຫວ່າງນິຕິບຸກຄົນທີ່ປະມວນຜົນ, ການຈັດການ ແລະ ນຳໃຊ້ຂໍ້ມູນເອເລັກໂຕຣນິກ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນທາງອີເລັກໂທຣນິກ ຈະໄດ້ຮັບຜົນປະໂຫຍດຈາກການຈັດປະເພດເພີ່ມເຕີມໂດຍນຳໃຊ້ແບບຢ່າງຄຳນິຍາມຂອງຄຳວ່າ "ຜູ້ຄວບຄຸມຂໍ້ມູນ" ໃນລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງ ສະຫະພາບເອີຣົບ (GDPR), ຊຶ່ງອາດຈະແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກຳນົດຈຸດປະສົງ ແລະ ວິທີການໃນການຄຸ້ມຄອງຂໍ້ມູນເອເລັກໂຕຣນິກ. ການຈັດປະເພດເພີ່ມເຕີມດັ່ງກ່າວນີ້ຈະເປັນການເຮັດໃຫ້ຮັບປະກັນວ່າ ບັນດາຜູ້ທີ່ມີຜົນປະໂຫຍດກ່ຽວຂ້ອງທີ່ມີສ່ວນຮ່ວມໃນການປະມວນຜົນຂໍ້ມູນມີພັນທະທາງກົດໝາຍ, ເຖິງແມ່ນວ່າພວກເຂົາບໍ່ໄດ້ຖືກກຳນົດວ່າເປັນຜູ້ຄຸ້ມຄອງຂໍ້ມູນກໍຕາມ. ການເຮັດແບບນີ້ຈະບໍ່ເປັນການສະກັດກັ້ນເຮັດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນທັງຜູ້ຄຸ້ມຄອງຂໍ້ມູນ ແລະ ຜູ້ຄວບຄຸມຂໍ້ມູນ ແລະ ອາດຈະມີບາງພັນທະທີ່ສາມາດໃຊ້ກັບທັງສອງກຸ່ມນິຕິບຸກຄົນນີ້ (ເຊັ່ນ: ການຂໍອະນຸຍາດຈາກ ເຈົ້າຂອງຂໍ້ມູນກ່ອນທີ່ຈະເກັບກຳຂໍ້ມູນ). ນອກຈາກນັ້ນ, ມັນຍັງມີຄວາມເປັນໄປໄດ້ທີ່ຈະກຳນົດສິດ ແລະ ພັນທະທີ່ແຕກຕ່າງກັນສຳລັບສອງກຸ່ມນິຕິບຸກຄົນນີ້.

<u>ຄຳນິຍາມທີ່ຢາກຂໍແນະນຳໃຫ້ນຳໃຊ້</u>

ພວກຂ້າພະເຈົ້າຂໍແນະນຳໃຫ້ ສປປ ລາວ ນຳເອົາຄຳນິຍາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງ ລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປ ຂອງສະຫະພາບເອີຣົບ (GDRP), ຊຶ່ງເປັນຄຳນິຍາມມາດຕະຖານທີ່ບັນດາປະເທດທີ່ມີກົດໝາຍປົກປ້ອງຂໍ້ມູນນຳໃຊ້.

ພວກເຮົາ ສາມາດ ກຳນົດຄຳນິຍາມ ຂອງ ຄຳວ່າ "ຂໍ້ມູນສ່ວນບຸກຄົນ" ແລະ "ເຈົ້າຂອງຂໍ້ມູນ" ໃນຂໍ້ກຳນົດໜຶ່ງດຽວດັ່ງນີ້ຄື:

> "ຂໍ້ມູນສ່ວນບຸກຄົນ" ໝາຍເຖິງຂໍ້ມູນໃດໜຶ່ງ ທີ່ກ່ຽວຂ້ອງກັບ ບຸກຄົນທີ່ຖືກລະບຸຕົວຕົນ ຫຼື ທີ່ສາມາດລະບຸຕົວຕົນໄດ້ (ຊຶ່ງຕໍ່ໄປໃນກົດໝາຍສະບັບນີ້ຈະຖືກເອີ້ນວ່າ "ເຈົ້າຂອງຂໍ້ມູນ"). ບຸກຄົນທີ່ສາມາດລະບຸຕົວຕົນໄດ້ ແມ່ນບຸກຄົນທີ່ສາມາດຖືກລະບຸຕົວຕົນໄດ້ໂດຍທາງກົງ ຫຼື ໂດຍທາງອ້ອມ, ໂດຍການອີງໃສ່ຂໍ້ມູນທີ່ຕົວລະບຸຕົວຕົນ ເຊັ່ນ ຊື່, ເລກບັດປະຈຳຕົວ, ຂໍ້ມູນທີ່ລະບຸທີ່ຢູ່, ຂໍ້ມູນທີ່ລະບຸຕົວຕົນທາງອອນລາຍ ຫຼື ໂດຍການອີງໃສ່ ຈຸດພິເສດສະເພາະຕົວໃດໜຶ່ງ ຫຼື ຫຼາຍຈຸດພິເສດສະເພາະຕົວທີ່ມີຄວາມສະເພາະທາງດ້ານກາຍະພາບ, ຮູບຮ່າງ, ພັນທຸກຳ, ຈິດໃຈ, ເສດຖະກິດ, ວັດທະນະທຳ ຫຼື ສັງຄົມ ຂອງ ບຸກຄົນດັ່ງກ່າວນັ້ນ.

ນອກຈາກນັ້ນ, ເພື່ອເຮັດໃຫ້ຮັບປະກັນວ່າ ກົດໝາຍສອດຄ່ອງກັບຫຼັກປະຕິບັດທົ່ວໄປ, ຊຶ່ງຂໍ້ມູນສ່ວນບຸກຄົນບາງປະເພດໄດ້ຖືກສື່ສານຢ່າງກວ້າງຂວາງໂດຍບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງຂໍ້ມູນ, ຄຳນິຍາມທີ່ໄດ້ຮັບການດັດແກ້ອາດຈະລະບຸວ່າຂໍ້ມູນສ່ວນບຸກຄົນ ບໍ່ກວມເຖິງ "ຂໍ້ມູນທີ່ກຳນົດພຽງແຕ່ຊື່, ຕຳແໜ່ງ, ບ່ອນເຮັດວຽກ ຫຼື ທີ່ຢູ່ທາງທຸລະກິດ" ເຊັ່ນດຽວກັນກັບທີ່ກຳນົດໄວ້ໃນກົດໝາຍປົກປ້ອງຂໍ້ມູນຂອງປະເທດສິງກະໂປ.

ຄຳສັບ ທີ່ວ່າ "ຜູ້ຄຸ້ມຄອງຂໍ້ມູນ" ຄວນໄດ້ຮັບການນິຍາມດັ່ງນີ້:

> "ຜູ້ຄຸ້ມຄອງຂໍ້ມູນ" ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ, ເຈົ້າໜ້າທີ່ລັດ, ອົງການ ຫຼື ພາກສ່ວນອື່ນໆ ທີ່ປະມວນຂໍ້ມູນສ່ວນບຸກຄົນແທນຜູ້ຄວບຄຸມຂໍ້ມູນ.

ທ້າຍສຸດແມ່ນ ກົດໝາຍ ຄວນຈະກຳນົດ "ຜູ້ຄວບຄຸມຂໍ້ມູນ" ເປັນປະເພດກຸ່ມນິຕິບຸກຄົນໃໝ່ເພີ່ມເຕີມ ແລະ ຄຳວ່າ "ຜູ້ຄວບຄຸມຂໍ້ມູນ" ຄວນຈະໄດ້ຮັບການນິຍາມດັ່ງນີ້:

> "ຜູ້ຄວບຄຸມຂໍ້ມູນ" ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ, ເຈົ້າໜ້າທີ່ລັດ, ອົງການ ຫຼື ອົງກອນອື່ນໆ ທີ່ກຳນົດຈຸດປະສົງ ແລະ ວິທີການໃນການປະມວນ ຜົນຂໍ້ມູນສ່ວນບຸກຄົນ ບໍ່ວ່າຈະແມ່ນກຳນົດດວ້ຍຕົນເອງແຕ່ພຽງຜູ້ດຽວ ຫຼື ຮ່ວມກັບພາກສ່ວນອື່ນ.

## 5.2. ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ຄວນປົກປ້ອງ "ຂໍ້ມູນສ່ວນບຸກຄົນ" ແລະ ກຳນົດຄຳນິຍາມຂອງຄຳວ່າ "ຂໍ້ມູນທົ່ວໄປ" ແລະ "ຂໍ້ມູນສະເພາະ" ຢ່າງຈະແຈ້ງ ແລະ ຊັດເຈນ.

ເພື່ອເຮັດໃຫ້ຂໍ້ມູນທີ່ກ່ຽວຂ້ອງກັບບຸກຄົນໄດ້ຮັບການປົກປ້ອງໄດ້ດີຂຶ້ນກວ່າເກົ່າ ໃນກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນທາງອີເລັກໂທຣນິກຄວນຈະມີພາກ ໜຶ່ງທີ່ກຳນົດກ່ຽວກັບຂໍ້ມູນສ່ວນບຸກຄົນໂດຍສະເພາະ. ຢູ່ໃນພາກດັ່ງກ່າວ, "ຂໍ້ມູນສ່ວນບຸກຄົນ" ອາດຈະມີຄຳນິຍາມຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5.1 ຂ້າງເທິງ ແລະ ຂໍ້ມູນສ່ວນບຸກຄົນສາມາດເກັບກຳ, ເຂົ້າເຖິງ, ນຳໃຊ້, ເຜີຍແຜ່ ແລະ ຖ່າຍໂອນໄດ້ ຖ້າຫາກໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ.

ຖ້າເຮັດຄືກັນກັບລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປ ຂອງ ສະຫະພາບເອີຣົບ (GDPR), ປະເພດຂອງ "ຂໍ້ມູນສະເພາະ" ຄວນຈະໄດ້ຮັບການກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນທາງອີເລັກໂທຣນິກ (ກະລຸນາເບິ່ງ ມາດຕາ 9 ຂອງ ລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR)). ຈະສາມາດຄຸ້ມຄອງຂໍ້ມູນດັ່ງກ່າວເພື່ອການໃຊ້ງານຢ່າງຖືກກົດໝາຍໃນສະຖານະການສະເພາະໃດໜຶ່ງໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ເທົ່ານັ້ນ. ຍົກຕົວຢ່າງ, ຜູ້ອອກແຮງງານຄົນໜຶ່ງ ອາດຈະອະນຸຍາດໃຫ້ຜູ້ໃຊ້ແຮງງານຂອງຕົນ ປະມວນຂໍ້ມູນດ້ານສຸຂະພາບຂອງຕົນ ເພື່ອຈຸດປະສົງໃດໜຶ່ງທີ່ກ່ຽວຂ້ອງກັບການຈ້າງງານ (ເຊັ່ນ ການພັກວຽກເວລາເຈັບເປັນ, ການກວດສຸຂະພາບ, ຜົນປະໂຫຍດຂອງປະກັນໄພ, ການປະກັນສັງຄົມ). ໃນລັກສະນະດຽວກັນ, ພະນັກງານຄົນໃໝ່ອາດຈະອະນຸຍາດໃຫ້ມີການປະມວນຂໍ້ມູນສະເພາະອື່ນໆ (ເຊັ່ນ ປະຫວັດອາຊະຍາກຳ) ທີ່ອາດຈະມີຄວາມຈຳເປັນສຳລັບຂັ້ນ ຕອນການຈ້າງງານ. ນອກຈາກນັ້ນ, ຂໍ້ມູນດັ່ງກ່າວ ອາດຈະເປັນທີ່ຕ້ອງການຂອງອົງການປົກຄອງທ້ອງຖິ່ນ ສຳລັບຂັ້ນຕອນ ການອອກໃບອະນຸຍາດດຳເນີນທຸລະກິດ.

ກົດໝາຍອາດຈະອະນຸຍາດໃຫ້ນຳໃຊ້ຂໍ້ມູນສະເພາະ ເພື່ອຈຸດປະສົງຕ່າງໆດັ່ງຕໍ່ໄປນີ້:

- ເພື່ອກິດຈະກຳທາງທຸລະກິດທີ່ຖືກຕ້ອງຕາມກົດໝາຍ (ເຊັ່ນ: ບໍລິສັດປະກັນໄພ);
- ເພື່ອການວິເຄາະທາງການແພດ (ເຊັ່ນ: ສຳລັບໂຮງໝໍ, ຜູ້ປະກອບວິຊາຊີບດ້ານສຸຂະພາບ);
- ເມື່ອຂໍ້ມູນຖືກເປີດເຜີຍຕໍ່ສາທາລະນະໂດຍເຈົ້າຂອງຂໍ້ມູນເອງ ແລະ ອື່ນໆ.

ນອກຈາກນັ້ນ, ອາດຈະມີການກຳນົດເງື່ອນໄຂເພີ່ມເຕີມສຳລັບ ຜູ້ຄຸ້ມຄອງຂໍ້ມູນ ແລະ ຜູ້ຄວບຄຸມຂໍ້ມູນ ເຊັ່ນ: ກຳນົດໃຫ້ການຂໍອະນຸຍາດນຳໃຊ້ຂໍ້ມູນມີຄວາມຊັດເຈນ, ຄວາມຈຳເປັນຕ້ອງໄດ້ຮັບອະນຸຍາດ ທີ່ເຈົ້າຂອງຂໍ້ມູນ ຮັບຊາບກ່ຽວກັບເປົ້າໝາຍການນຳໃຊ້ ຫຼື ເງື່ອນໄຂທາງດ້ານວິຊາການອື່ນໆ.

ເນື່ອງຈາກຄຳວ່າ "ເຈົ້າຂອງຂໍ້ມູນ" ຈະໄດ້ຮັບການນິຍາມໃໝ່ ໃຫ້ໝາຍເຖິງ ບຸກຄົນ ແລະ ເນື່ອງຈາກວ່າ ຂໍ້ມູນຂອງບຸກຄົນດັ່ງກ່າວ ຈະຖືກປົກປ້ອງພາຍໃຕ້ "ຂໍ້ມູນສ່ວນບຸກຄົນ/ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ" ຊຶ່ງເປັນປະເພດຂໍ້ມູນທີ່ໄດ້ຮັບການກຳນົດໃໝ່, ດັ່ງນັ້ນ ຈຶ່ງບໍ່ມີຄວາມຈຳເປັນທີ່ຈະຕ້ອງມີປະເພດ "ຂໍ້ມູນທົ່ວໄປ" ແຍກອອກມາຕ່າງຫາກຕື່ມອີກ. ຖ້າຕັດສິນໃຈວ່າຍັງຈະຮັກສາຂໍ້ມູນປະເພດດັ່ງກ່າວໄວ້ຢູ່, ມັນມີຄວາມຈຳເປັນທີ່ຈະຕ້ອງກຳນົດຄຳນິຍາມຂອງມັນຄືນໃໝ່ ເພື່ອເຮັດໃຫ້ມັນກວມເຖິງຂໍ້ມູນທີ່ກ່ຽວຂ້ອງກັບເຈົ້າຂອງຂໍ້ມູນທີ່ບໍ່ຖືກກຳນົດເປັນ "ຂໍ້ມູນສ່ວນບຸກຄົນ" (ເຊັ່ນ ບົດຄວາມທາງດ້ານວິຊາການ). ໃນລັກສະນະດຽວກັນ, ກໍຕ້ອງໄດ້ພິຈາລະນາເບິ່ງວ່າຄວນຈະມີປະເພດ "ຂໍ້ມູນທີ່ມີຄວາມລະອຽດອ່ອນ" ຕື່ມອີກຫຼືບໍ່ ຖ້າຫາກມີ "ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ" ຊຶ່ງເປັນຂໍ້ມູນປະເພດໃໝ່ແລ້ວ.

## 5.3. ບັນດາລາຍການທີ່ເປັນ ຂໍ້ມູນຕ້ອງຫ້າມ ຄວນຈະຖືກຕັດອອກ ຫຼື ດັດແກ້ເພື່ອ ເຮັດໃຫ້ສາມາດນຳໃຊ້ຂໍ້ມູນດັ່ງກ່າວໄດ້ງ່າຍຂຶ້ນກວ່າເກົ່າ.

ອີກໜຶ່ງທາງເລືອກແມ່ນການລຶບລ້າງປະເພດ "ຂໍ້ມູນຕ້ອງຫ້າມ" ອອກທັງໝົດ. ປະເພດ "ຂໍ້ມູນສະເພາະ" ຫຼື ປະເພດ "ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ" ທີ່ສະເໜີໃຫ້ມີ ຈະເຮັດໃຫ້ຮັບປະກັນວ່າ ຂໍ້ມູນທີ່ມີຄວາມລະອຽດອ່ອນໄດ້ຮັບການປົກປ້ອງຢ່າງເໝາະສົມ, ໃນຂະນະດຽວກັນ ກໍຍັງສາມາດເຮັດໃຫ້ຂໍ້ມູນດັ່ງກ່າວໄດ້ຮັບການຄຸ້ມຄອງໃນບາງກໍລະນີ. ສິ່ງນີ້ແມ່ນມີຄວາມສຳຄັນ ເມື່ອມີຄວາມຈຳເປັນຕ້ອງປະມວນ ຂໍ້ມູນທີ່ມີຄວາມລະອຽດອ່ອນ ເຊັ່ນ: ໃນການຈ້າງງານ, ການປິ່ນປົວສຸຂະພາບ ຫຼື ການບໍລິຫານລັດ ດັ່ງທີ່ໄດ້ກ່າວມາ ຂ້າງເທິງ.

ຖ້າວ່າປະເພດຂໍ້ມູນຕ້ອງຫ້າມ ໄດ້ຮັບການຮັກສາໄວ້, ມັນຄວນໄດ້ຮັບການດັດແກ້ໂດຍກຳນົດວ່າ ບັນດາກະຊວງເປັນຜູ້ຄຸ້ມຄອງຂໍ້ມູນ. ຕົວຢ່າງ, ກະຊວງປ້ອງກັນຄວາມສະຫງົບ ຈະສາມາດປ່ຽນຮູບແບບການຈັດເກັບຂໍ້ມູນ ປະຫວັດອາຊະຍາກຳ ທີ່ກະຊວງດັ່ງກ່າວໄດ້ເກັບຮັກສາໄວ້ໃນຮູບແບບເອເລັກໂຕຣນິກ ມາເປັນຮູບແບບທີ່ບໍ່ແມ່ນເອເລັກໂຕຣນິກໄດ້ ຫຼື ບໍ່ ເຊິ່ງ ບັນຫານີ້ຍັງເປັນທີ່ສົງໄສຢູ່.

ໃນຂະນະດຽວກັນ, ໃນລະຫວ່າງການສຳຫຼວດພົນລະເມືອງ, ຂໍ້ມູນສ່ວນໃຫຍ່ທີ່ຖືກກຳນົດວ່າເປັນຂໍ້ມູນຕ້ອງຫ້າມ ໄດ້ຖືກເກັບກຳໂດຍບັນດາກະຊວງ ຫຼື ອົງການລັດທີ່ແຕກຕ່າງກັນ ແລະ ໄດ້ຖືກຄຸ້ມຄອງໃນຮູບແບບເອເລັກໂຕຣນິກ. ການປັບປຸງແກ້ໄຂລາຍການດັ່ງກ່າວນີ້ຈະຊ່ວຍເຮັດໃຫ້ໝັ້ນໃຈວ່າໂຄງສ້າງທາງດ້ານກົດໝາຍມີຄວາມສອດຄ່ອງກັບວິທີການນຳໃຊ້ຂໍ້ມູນດັ່ງກ່າວໃນພາກຕົວຈິງ ໂດຍອົງການລັດ ແລະ ຜູ້ປະກອບການທຸລະກິດ.

## 5.4. ຄວນມີການຄົ້ນຄວ້າພິຈາລະນາຢ່າງລະອຽດກ່ຽວກັບເງື່ອນໄຂທາງກົດໝາຍທີ່ກຳນົດໃຫ້ ທັງພາກລັດ ແລະ ພາກເອກະຊົນແຕ່ງຕັ້ງເຈົ້າໜ້າທີ່ປົກປ້ອງຂໍ້ມູນ ແລະ ຮັບປະກັນໄດ້ວ່າຂໍ້ມູນໄດ້ຮັບການປົກປ້ອງຢ່າງເໝາະສົມ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ໄດ້ນຳສະເໜີແນວຄິດກ່ຽວກັບການແຕ່ງຕັ້ງເຈົ້າໜ້າທີ່ທີ່ຮັບຜິດຊອບໃນການປົກປ້ອງຂໍ້ມູນສະເພາະ (ມາດຕາ 23, ຂໍ້ 1). ຄວນຈະຄົ້ນຄວ້າພິຈາລະນາຂໍ້ກຳນົດດັ່ງກ່າວນີ້ຢ່າງ ລະອຽດ ແລະ ກຳນົດໃຫ້ມີການແຕ່ງຕັ້ງເຈົ້າໜ້າທີ່ປົກປ້ອງຂໍ້ມູນທີ່ມີຄວາມເປັນເອກະລາດ ເຊັ່ນດຽວກັນກັບຜູ້ກວດສອບບັນຊີອິດສະຫຼະ ທີ່ລາຍງານຕໍ່ຜູ້ບໍລິຫານກ່ຽວກັບບັນຫາທີ່ກ່ຽວຂ້ອງກັບການປົກປ້ອງຂໍ້ມູນສ່ວນບຸກຄົນ. ຖ້າເຮັດແບບດຽວກັນກັບລະບຽບການຄຸ້ມຄອງຂໍ້ມູນໂດຍທົ່ວໄປຂອງສະຫະພາບເອີຣົບ (GDPR), ເຈົ້າໜ້າທີ່ປົກປ້ອງຂໍ້ມູນດັ່ງກ່າວນີ້ ຈະຕ້ອງໄດ້ຮັບການຈົດທະບຽນກັບບັນດາອົງການລັດທີ່ກ່ຽວຂ້ອງ (ເຊັ່ນ LaoCERT) ແລະ ຈະເຮັດໃຫ້ຮັບປະກັນວ່າຂໍ້ກຳນົດທາງກົດໝາຍໄດ້ຮັບການປະຕິບັດຢ່າງຖືກຕ້ອງ. ເຈົ້າໜ້າທີ່ດັ່ງກ່າວນີ້ຈະເຮັດໜ້າທີ່ເປັນບ່ອນຕິດຕໍ່ກັບເຈົ້າໜ້າທີ່ທີ່ຮັບຜິດຊອບວຽກງານປົກປ້ອງຂໍ້ມູນໃນປະເທດລາວ. LaoCERT ສາມາດຕິດຕໍ່ປະສານງານ ກັບພາກເອກະຊົນ ໂດຍຜ່ານເຈົ້າໜ້າທີ່ປົກປ້ອງຂໍ້ມູນເມື່ອມີບັນຫາເກີດຂຶ້ນ.

ການແຕ່ງຕັ້ງເຈົ້າໜ້າທີ່ສະເພາະສຳລັບການປົກປ້ອງຂໍ້ມູນສ່ວນບຸກຄົນຕາມກົດໝາຍ ອາດຈະລວມໄປເຖິງ ນິຕິບຸກຄົນທີ່ເປັນຜູ້ຄຸ້ມຄອງຂໍ້ມູນ ແລະ ບັນດາຜູ້ປະກອບການທຸລະກິດ (ເຊັ່ນ: ບໍລິສັດປະກັນໄພ) ແລະ ບັນດາຫົວໜ່ວຍທຸລະກິດທີ່ເພິ່ງພາການຄຸ້ມຄອງຂໍ້ມູນເອເລັກໂຕຣນິກໃນປະລິມານທີ່ຫຼາຍ (ເຊັ່ນ: ບໍລິສັດຄ້າຂາຍທາງເອເລັກໂຕຣນິກ ຫຼື ບໍລິສັດເທັກໂນໂລຢີທາງດ້ານການເງິນ (fintech)) ຊຶ່ງອາດຈະເປັນໄດ້ທັງຜູ້ຄຸ້ມຄອງຂໍ້ມູນ ແລະ ຜູ້ຄວບຄຸມຂໍ້ມູນ. ຄວນຈະກຳນົດພັນທະຂອງນິຕິບຸກຄົນທີ່ມີຄວາມສ່ຽງສູງ ແລະ ນິຕິບຸກຄົນທີ່ຄຸ້ມຄອງຂໍ້ມູນທີ່ຈະຕ້ອງໄດ້ຮັບການປົກປ້ອງເປັນພິເສດ (ເຊັ່ນ: ຂໍ້ມູນສະເພາະ ຫຼື ຂໍ້ມູນຕ້ອງຫ້າມ). ນອກຈາກນັ້ນ, ຄວນຈະກຳນົດພັນທະຂອງນິຕິບຸກຄົນ ທີ່ຄຸ້ມຄອງຂໍ້ມູນສ່ວນບຸກຄົນໃນປະລິມານທີ່ຫຼາຍ. ບັນດານິຕິບຸກຄົນທີ່ບໍ່ໄດ້ແຕ່ງຕັ້ງເຈົ້າໜ້າທີ່ປົກປ້ອງຂໍ້ມູນ ບໍ່ຄວນໄດ້ຮັບອະນຸຍາດໃຫ້ຄຸ້ມຄອງຂໍ້ມູນສ່ວນບຸກຄົນ.

## 5.5 ຍັງຂາດຄວາມໂປ່ງໃສກ່ຽວກັບການລະເມີດຂໍ້ມູນເນື່ອງຈາກການແຈ້ງກ່ຽວກັບການລະເມີດຂໍ້ມູນຍັງບໍ່ທັນໄດ້ຖືກກຳນົດໃຫ້ເປັນສິ່ງທີ່ຈະຕ້ອງປະຕິບັດຢູ່ໃນລາວ.

ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ພຽງແຕ່ແນະນຳໃຫ້ ຜູ້ຄຸ້ມຄອງຂໍ້ມູນ ເຮັດວຽກຮ່ວມກັບ LaoCERT ໃນການຊອກຫາວິທີແກ້ໄຂບັນຫາການລະເມີດຂໍ້ມູນ ຫຼື ຖ້າລະບົບຖືກບຸກລຸກ (ມາດຕາ 26). ໃນລັກສະນະດຽວກັນ, ຄຳແນະນຳພຽງແຕ່ແນະນຳໃຫ້ຜູ້ຄຸ້ມຄອງຂໍ້ມູນຂໍຄຳແນະນຳ ແລະ ປະສານກັບເຈົ້າໜ້າທີ່ ເພື່ອຂໍຄວາມຊ່ວຍເຫຼືອທາງດ້ານເຕັກນິກ ແລະ ຄຳປຶກສາ ເພື່ອປ້ອງກັນບໍ່ໃຫ້ການບຸກລຸກ "ລຸກລາມໄປຫຼາຍກວ່າເກົ່າ" ເທົ່ານັ້ນ (ຂໍ້ 18).
ເພື່ອຮັບປະກັນເຮັດໃຫ້ເກີດມີ ຄວາມໂປ່ງໃສ ແລະ ມີການປົກປ້ອງຂໍ້ມູນ, ກົດໝາຍຄວນກຳນົດໃຫ້ຜູ້ຄຸ້ມຄອງຂໍ້ມູນ ຕ້ອງລາຍງານການລະເມີດຂໍ້ມູນ. ຂໍ້ບັງຄັບການແຈ້ງດັ່ງກ່າວນີ້ອາດຈະຖືກນຳໃຊ້ເມື່ອມີການລະເມີດຂໍ້ມູນບາງປະເພດ (ເຊັ່ນ: ຂໍ້ມູນສະເພາະ) ຫຼື ມີການລະເມີດຂໍ້ມູນໃນປະລິມານທີ່ແນ່ນອນໃດໜຶ່ງ.

## ຜູ້ຂຽນບົດຄວາມ



**Daniel Ferguson**
daniel.f@tilleke.com



**Dino Santaniello**
dino.s@tilleke.com



**Naiyane Xaechao**
naiyane.x@tilleke.com

Tilleke & Gibbins

ECCIL
EuroCham Laos

ຕຶກອາຄານ EUROCHAM LAOS
ບ້ານ ອານຸ,
ຕູ້ໄປສະນີ 11781 ເມືອງ ຈັນທະບູລີ, 1000
ໂທ: +856 21 264 330
Email: contact@eccil.org
www.eccil.org